Empowered lives.
Resilient nations.

# ຂ່າວອອກຂ່າວ

## ກ່ຽວກັບການກະກຽມກອງປະຊຸມໂຕະມົນປະຈຳປີ 2018

**ນະຄອນຫຼວງວຽງຈັນ, ວັນທີ 28 ມິຖຸນາ 2018 -** ກະຊວງແຜນການ ແລະ ການລົງທຶນ ຮ່ວມກັບ ອົງການສະຫະປະຊາຊາດເພື່ອການພັດທະນາປະຈຳ ສປປ ລາວ ໄດ້ຈັດພິທີພົບປະນັກຂ່າວຂຶ້ນທີ່ ຫ້ອງຮັບແຂກຂອງກະຊວງແຜນການ ແລະ ການລົງທຶນ ກ່ຽວກັບ ການກະກຽມກອງປະຊຸມໂຕະມົນປະຈຳປີ 2018 ພາຍໃຕ້ຫົວຂໍ້ *"ການສະຫຼຸບກາງສະໄໝການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII - ຄວາມຄືບໜ້າໃນການຈັດຕັ້ງຜັນຂະຫຍາຍເປົ້າໝາຍການພັດທະນາແບບຍືນຍົງ ແລະ ການຮ່ວມມືເພື່ອການພັດທະນາທີ່ມີປະສິດທິຜົນ"* ເຊິ່ງຈະໄດ້ຈັດຂຶ້ນໃນທ້າຍເດືອນ ພະຈິກ ທີ່ ນະຄອນຫຼວງວຽງຈັນ.

ຈຸດປະສົງຂອງກອງປະຊຸມໂຕະມົນປະຈຳປີຄັ້ງນີ້ ແມ່ນເພື່ອ (1) ລາຍງານຜົນສຳເລັດຕົ້ນຕໍຂອງ ການສະຫຼຸບກາງສະໄໝການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII, ການເຊື່ອມສານ ແລະ ຜັນຂະຫຍາຍເປົ້າໝາຍການພັດທະນາແບບຍືນຍົງ (SDGs) ເຂົ້າໃນນະໂຍບາຍການພັດທະນາແຫ່ງຊາດໂດຍອີງໃສ່ບົດປະເມີນຄວາມຄືບໜ້າການຈັດຕັ້ງປະຕິບັດ SDGs ແຫ່ງຊາດແບບສະໝັກໃຈຄັ້ງທຳອິດທີ່ໄດ້ນຳສະເໜີຕໍ່ກອງປະຊຸມເວທີການເມືອງລະດັບສູງ ທີ່ ສຳນັກງານໃຫຍ່ຂອງອົງການ ສປຊ ໃນເດືອນ ກໍລະກົດ 2018, ການປະເມີນສະຖານະພາບປະເທດດ້ອຍພັດທະນາທີ່ດຳເນີນໃນເດືອນມີນາ 2018, ແລະ ການສຳຫຼວດການຈັດຕັ້ງປະຕິບັດຖະແຫຼງການວຽງຈັນ ວ່າດ້ວຍການເປັນຄູ່ຮ່ວມເພື່ອການພັດທະນາທີ່ມີປະສິດທິຜົນ ແລະ ແຜນດຳເນີນງານຖະແຫຼງການວຽງຈັນດັ່ງກ່າວ; ແລະ (2) ກຳນົດໜ້າວຽກລະອຽດດ້ານທຶນຮອນເພື່ອການພັດທະນາ ແລະ ການສ້າງຄວາມອາດສາມາດໃນການແກ້ໄຂສິ່ງທ້າທາຍຕົ້ນຕໍຕ່າງໆ ສຳລັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5ປີ ຄັ້ງທີ VIII (2016-2020) ໃນໄລຍະທ້າຍສະໄໝ ພ້ອມທັງກຳນົດຫົວຂໍ້ຕົ້ນຕໍ/ຂົງເຂດບູລິມະສິດສຳລັບການກະກຽມສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5ປີ ຄັ້ງທີ IX (2021-2025).

ຢູ່ພິທີພົບປະນັກຂ່າວໃນມື້ນີ້, ທ່ານ ປອ ກິແກ້ວ ຈັນທະບູຣີ, ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ໄດ້ເນັ້ນວ່າ: "ຂະບວນການໂຕະມົນ ແມ່ນເວທີທີ່ສຳຄັນຢ່າງຍິ່ງ ຊຶ່ງສ້າງໂອກາດໃຫ້ແກ່ ລັດຖະບານ ແລະ ຄູ່ຮ່ວມພັດທະນາ ແລະ ພາກສ່ວນກ່ຽວຂ້ອງ ໃນລະດັບສູນກາງ ແລະ ທ້ອງຖິ່ນ ໄດ້ມີການທົບທວນ, ປຶກສາຫາລືກ່ຽວກັບປະເດັນຕ່າງໆທີ່ຕິດພັນກັບວຽກງານການພັດທະນາ, ສ້າງຄວາມເຂົ້າໃຈ ແລະ ໄດ້ໃຫ້ຄຳໝັ້ນສັນຍານຳກັນໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ພາຍໃຕ້ຄວາມເປັນເຈົ້າການຂອງລັດຖະບານໃນແຕ່ລະໄລຍະ".

ພ້ອມນີ້, ທ່ານ ຮອງລັດຖະມົນຕີ ຍັງໄດ້ຍົກໃຫ້ເຫັນເຖິງຄວາມໝາຍສຳຄັນຂອງປີ 2018 ອີກວ່າ "ນອກຈາກຈະເປັນ "ປີທ່ອງທ່ຽວລາວ" ແລ້ວ, ຍັງເປັນປີທີ່ມີຄາດໝາຍບຸກທະລຸໃນຫຼາຍດ້ານ ບໍ່ວ່າຈະເປັນ ການສະຫຼຸບກາງສະໄໝແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ກໍ່ຄືການ ການປະເມີນການຫຼຸດພົ້ນອອກຈາກ

ສະຖານະພາບປະເທດດ້ອຍພັດທະນາ ແລະ ການປະເມີນຄວາມຄືບໜ້າໃນການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ".

ທ່ານ ນາງ ຄາຣິນາ ອິມໂມເນັນ, ຜູ້ປະສານງານ ຂອງ ອົງການສະຫະປະຊາຊາດ, ຜູ້ຕາງໜ້າ ອົງການ ສະຫະປະຊາຊາດເພື່ອການພັດທະນາ ປະຈຳ ສປປ ລາວ ໄດ້ໃຫ້ຄຳເຫັນວ່າ: "ອົງການສະຫະປະຊາຊາດເພື່ອການພັດທະນາ ໃນນາມທີ່ເປັນປະທານຮ່ວມຂອງຂະບວນການໂຕະມົນ ເຂົ້າໃຈວ່າ ການຮັກສາໃຫ້ມີ ການສົນທະນາປຶກສາຫາລືກັນຢ່າງເປັນປົກກະຕິ ແມ່ນການລົງທຶນທີ່ດີເລີດ ເນື່ອງຈາກວ່າ ພວກເຮົາເພີ່ມທະວີສ້າງຄວາມເຂັ້ມແຂງໃຫ້ແກ່ການເປັນຄູ່ຮ່ວມ ແລະ ພ້ອມກັນເຮັດວຽກເພື່ອບັນລຸຈຸດປະສົງ ແລະ ລະດັບຄາດໝາຍການພັດທະນາແບບຍືນຍົງຂອງພວກເຮົາທີ່ໄດ້ເປັນເອກະພາບກັນ ໃນການໃຫ້ການສະໜັບສະໜູນ ແກ່ ສປປ ລາວ ໂດຍສະເພາະ ການແກ້ໄຂຄວາມທຸກຍາກ ຫຼື ການຕອບສະໜອງຄວາມຕ້ອງການຂອງປະຊາຊົນຜູ້ທີ່ຖືກລືມໄວ້ຂ້າງຫຼັງ".

ເບິ່ງຂໍ້ມູນເພີ່ມເຕີມໄດ້ທີ່ເວັບໄຊທ໌ຂອງໂຕະມົນ: http://rtm.org.la/

**ພົວພັນຂໍ້ມູນໄດ້ທີ່:**

- **ທ່ານ ມໍລະກົດ ວົງໄຊ, ຫົວໜ້າພະແນກ ອົງການຈັດຕັ້ງສາກົນ, ກົມຮ່ວມມືສາກົນ, ກ/ຊ ແຜນການແລະການລົງທຶນ ໂທ**: **020-2244 8892**, Email: k_vongxay@hotmail.com
- **ນາງ** Ildiko Hamos-Sohlo, **ຊ່ຽວຊານດ້ານການສື່ສານ, ອົງການ ສປຊ ປະຈຳ ສປປ ລາວ ໂທ**: **+856 21 267 778**, **ມືຖື: +856 20 7717 7913,** Email: ildiko.hamos@undp.org